# ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

### ວັນອາທິດ ທີ 27 ເມສາ 2008 ( 04-27-2008 )

---

## ສຳຣວດເບິ່ງການຖ່ອມໃຈ:

**ຂໍ້ພຣະຄັມພີໃນບົດຮຽນ:** (ປະຖົມມະການ 32:3,6-12; 33:1-5, 9-11)

**ຄຳຖາມແຫ່ງຊີວິດ:** ເຮັດແນວໃດຂ້າພະເຈົ້າຈຶ່ງຈະຖ່ອມໃຈໄດ້?

**ຄວາມຈິງໃນພຣະຄັມພີ:** ຄົນຂອງພຣະເຈົ້າຜູ້ທີ່ມີຄວາມເຊື່ອໄດ້ຖ່ອມໃຈຕໍ່ພຣະເຈົ້າ ແລະຄົນອື່ນ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ຂຽນຂຶ້ນເພື່ອຊ່ອຍທ່ານໃຫ້ທ່ານຄົ້ນຫາຫົນທາງໃໝ່ໃນຄວາມເຊື່ອຂອງທ່ານໂດຍ:

- ໃຫ້ກວດກາເບິ່ງການຖ່ອມໃຈທີ່ຢາໂຄບມີໃນຊີວິດ, ແລະ
- ຄຳນວນເບິ່ງວ່າທ່ານມີການຖ່ອມໃຈ ຫລື ມີຄວາມອວດຕົວ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**ແຜນການສອນ**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**ແນະນຳ:**

- ໃຫ້ມີຄວາມສົນໃຈໃນຄຳຖາມແຫ່ງຊີວິດສຳລັບອາທິດນີ້. ພາກສຶກສາ: ເຮັດແນວໃດຂ້າພະເຈົ້າຈຶ່ງຈະຖ່ອມໃຈໄດ້? ໃຫ້ນັກຮຽນສງົບຈິດໃຈເພື່ອເອົາຈຸດສົນໃຈສຸມໃສ່ໃນສິ່ງທີ່ສຳຄັນຕໍ່ຄຳຖາມທີ່ວ່າ: ເປັນຫຍັງການຖ່ອມຕົວຈຶ່ງເປັນການສຳຄັນແກ່ຜູ້ທີ່ເຊື່ອທັງຫລາຍ? ຂໍໃຫ້ອະທິບາຍມາເບິ່ງ. ເປັນຫຍັງຜູ້ທີ່ເຊື່ອຕ້ອງຖ່ອມຕົວຕໍ່ພຣະພັກພຣະເຈົ້າ ແລະຕໍ່ເພື່ອນມະນຸດດ້ວຍກັນ?
- ຖາມ: ທ່ານມັກໃຫ້ຄົນອື່ນຖ່ອມຕົວຢ່າງໃດຫລາຍທີ່ສຸດ? ທ່ານຈະຖ່ອມຕົວໃນທາງໃດເພື່ອໃຫ້ຄົນອື່ນເຫັນ?

## 1. <u>ສຳຣວດເບິ່ງສະພາບການ:</u> ( ປະຖົມມະການ 32:3,6-8)

- ຂໍໃຫ້ນັກຮຽນອາສາສມັກອ່ານ ເປະຖົມມະການ 32:3,6-8) .
- ສົນທະນາຕອນທີ່ຢາໂຄບຈັດຕຽມເອົາສິ່ງຂອງໄປໃຫ້ແກ່ເອຊາວໃນເວລາໄປພົບເອຊາວ. ເປັນຫຍັງຢາໂຄບຈຶ່ງມີຄວາມຢ້ານກົວອ້າຍຂອງລາວ? ລາວໄດ້ປະເມີນເບິ່ງສະພາບການແບບໃດ?
- ຢາໂຄບໄດ້ສັ່ງຄວາມໄປຫາເອຊາວວ່າແນວໃດ?
- ໃນຂໍ້ 7-8 ຢາໂຄບໄດ້ເຮັດແນວໃດໃນເມື່ອລາວໄດ້ຍິນຂ່າວວ່າເອຊາວຈະມາພົບລາວ?

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ປະຖົມມະການ 32:3,6-8)

1. ໃນຂໍ້ທີ 6-8 ໄດ້ຊີ້ໃຫ້ເຫັນການຈັດຕຽມຮັບສະຖານນະການຂອງຢາໂຄບຢ່າງໃດ? ເປັນຫຍັງຈຶ່ງວ່າ ການທີ່ຈະເຂົ້າໃຈສະຖານນະການຕ່າງ ໆ ຂອງພວກເຮົາຈຶ່ງເປັນການສຳຄັນຢ່າງນຶ່ງທີ່ພາໃຫ້ເຮົາຖ່ອມໃຈໄດ້?
2. ໃນເມື່ອພວກເຮົາຍັງຢູ່ໃນຄວາມອວດອົ່ງທະນົງຕົວນັ້ນເປັນຫຍັງຈຶ່ງເຮັດໃຫ້ເຮົາເຫັນຄຸນຄ່າຂອງພວກເຮົາເອງໃນຄວາມຍາກລຳບາກ?
3. ໃນການທີ່ຢາໂຄບຈະພົບກັບເອຊາວນັ້ນແມ່ນຫຍັງທີ່ຢາໂຄບບໍ່ຮູ້ ແຕ່ລາວໄດ້ຈັດຕຽມຕ້ອນຮັບສະພາບການໄວ້ຢ່າງຮອບຄອບ ດ້ວຍເຫດໃດ?
4. ພວກເຮົາຈະເຮັດແນວໃດຖ້າພວກເຮົາເປັນຢາໂຄບ?

## 2. <u>ຖ່ອມໃຈລົງຕໍ່ພຣະເຈົ້າ</u> (ປະຖົມມະການ 32:9-12)

- ຂໍໃຫ້ອາສາສມັກອ່ານພຣະທັມ ປະຖົມມະການ 32:9-12
- ເປັນຫຍັງຄົນເຮົາຈຶ່ງພູມໃຈຢູ່ໃນຄວາມມືດມົນ ແລະໜ້າຢ້ານກົວນັ້ນ? ໃນຄວາມຢ້ານກົວຂອງຢາໂຄບໄດ້ຊີ້ບອກທ່ານເຫັນເຖິງເຣື່ອງສະພາບການທີ່ທ່າທີຂອງລາວ ແລະຕໍ່ພຣະເຈົ້າຢ່າງໃດ?
- ໃຫ້ເຮັດເປັນສອງຄໍລັມ, ຄໍລັມທີນຶ່ງຂຽນ **ຄວາມທະນົງຕົວ** ຄໍລັມທີສອງຂຽນ **ຖ່ອມຕົວ** ໃຫ້ນັກຮຽນຊອກຫາຄຳຕອບທີ່ເຂົາເຈົ້າເປັນພຍານໄດ້ໃນເມື່ອພົບກັບປັນຫາ, ຂຽນການຕອບສນອງຂອງຢາໂຄບທີ່ລາວໄດ້ຖ່ອມຕົວ ໃນຂໍ້ທີ 9-12 ໃນຍາມມີປັນຫາ ແລະຍາມສຸກສະບາຍໃສ່ຕາມຄຳທີ່ເໝາະສົມໃນຄໍລັມໃດ ຄໍລັມນັ້ນ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ປະຖົມມະການ 32:9-12)

1. ເປັນຫຍັງພວກເຮົາຈຶ່ງບໍ່ຢາກຍອມຮັບວ່າພວກເຮົາຢູ່ໃນຄວາມມືດ ແລະຄວາມຢ້ານກົວ? ຄົນອື່ນເຫັນວ່າເປັນແນວໃດໃນເມື່ອເຮົາຍອມຮັບວ່າພວກເຮົາຕົກຢູ່ໃນຄວາມມືດ?
2. ຢາໂຄບມີຄວາມຢ້ານກົວຜູ້ໃດ? ຄວາມຢ້ານກົວນີ້ໄດ້ບອກທ່ານເຖິງເຣື່ອງຂອງຢາໂຄບຢ່າງໃດ? ແມ່ນໃຜທີ່ເປັນຜູ້ທີ່ສົນໃຈທ່ານໃນເວລາທ່ານມີປັນຫາອັນຕະລາຍ?
3. ພຣະເຈົ້າໄດ້ກະທຳຢ່າງໃດແກ່ຢາໂຄບໃນເມື່ອລາວທູນຂໍລາວເວົ້າວ່າແນວໃດໃນຂໍ້ທີ 9-12? ການຈົດຈຳ ແລະຮູ້ສຶກຕົວໃນສິ່ງທີ່ພຣະເຈົ້າຊົງກະທຳ, ຄວາມຮັກ, ຄວາມເມດຕາພວກເຮົາຈຶ່ງເປັນການສຳຄັນ?

## 3. <u>ຖ່ອມໃຈລົງຕໍ່ຄົນອື່ນ:</u> (ປະຖົມມະການ 33:1-3)

- ຂໍໃຫ້ອາສາສມັກອ່ານພຣະທັມ ປະຖົມມະການ 33:1-3
- ສົນທະນາເຣື່ອງອັນທີນຶ່ງທີ່ຢາໂຄບໄດ້ຈັດຕຽມໄປໃຫ້ເອຊາວອ້າຍຂອງລາວ.

- ໃນທາງໃດທີ່ຢາໂຄບໄດ້ເປັນແບບຢ່າງແກ່ພວກເຮົາໃນເມື່ອພວກເຮົາຊອກສແວງຫາວິທີຖືກຕ້ອງປອງດອງກັນ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u>** (ປະຖົມມະການ 33:1-3)

1. ທີ່ຈິງແລ້ວພຣະເຈົ້າໃຫ້ພວກເຮົາພົບກັບປັນຫາເພື່ອຫຍັງ?
2. ໃນເມື່ອພວກເຮົາທຳໜ້າທີ່ການໃຫ້ຖືກຕ້ອງປອງດອງຢູ່ນັ້ນຫາກເຮົາຫາກມີໃຈຖ່ອມແລ້ວພຣະເຈົ້າຈະທຳຢ່າງໃດ?
3. ແມ່ນຫຍັງທີ່ເປັນສິ່ງທີ່ກີດຂວາງໃນການກະທຳການຖືກຕ້ອງປອງດອງກັນ?

**4. <u>ຍອມຮັບວ່າພຣະເຈົ້າມີສ່ວນ:</u>** (ປະຖົມມະການ 33:4-5, 9-11)

- ຂໍໃຫ້ອາສາສມັກອ່ານພຣະທັມ ປະຖົມມະການ 33:4-5, 9-11
- ຖ້າຫາກຢາໂຄບຍັງອວດອົ່ງທະນົງຕົວຢູ່ການພົບກັບເອຊາວຈະມີຫຍັງເກີດຂຶ້ນ?
- ສິ່ງສຳຄັນທີ່ຢາໂຄບໃຫ້ແກ່ເອຊາວນັ້ນກໍຄືຄວາມຂອບໃຈ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ປະຖົມມະການ 33:4-5, 9-11)

1. ເວລາມີປັນຫາໃນເມື່ອທ່ານຫາກຍັງຢູ່ໃນຄວາມອວດອົ່ງທະນົງຕົວ ແລະທົວແຂງຢູ່ຈະມີຫຍັງເກີດຂຶ້ນ?
2. ທ່ານຈະຕອບສນອງຢ່າງໃດໃນເມື່ອຄວາມຢ້ານກົວ ແລະປັນຫາເຂົ້າມາຫາທ່ານ?
3. ທ່ານຈະໃຫ້ພອນຢ່າງໃດໃນເມື່ອຄົນອື່ນໃຫ້ຄຳຂອບໃຈແກ່ທ່ານ?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ:</u>

- ພວກເຮົາຄວນປະເມີນເບິ່ງສະພາບການ ແລະຈັດຕຽມ ການປ້ອງກັນເພື່ອບໍ່ໃຫ້ເສັຽຫາຍ.
- ຄວາມດີຂອງພວກເຮົາທຸກຄົນມີນ້ອຍ ແຕ່ພຣະເຈົ້າເປັນຜູ້ກະທຳສຳລັບພວກເຮົາ, ຄວາມດີຂອງພຣະອົງເຮັດໃຫ້ພວກເຮົາຖ່ອມໃຈລົງ.
- ການຖ່ອມຕົວຂອງພວກເຮົາຕໍ່ຄົນອື່ນສາມາດຊ່ອຍປົວແປງການແຕກຫັກຂອງຄວາມສັມພັນໄດ້.
- ການຮູ້ຈັກວ່າພຣະເຈົ້າມີສ່ວນໃນການອວຍພອນດ້ວຍການຖ່ອມໃຈ ເຮັດໃຫ້ສາມາດກວດສອບໃຫ້ເຫັນຄວາມຜິດບາບ ແລະຄວາມອວດອົ່ງທະນົງຕົວໄດ້.

( ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປ ແລະຮຽບຮຽງໂດຍ JH )